ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ສຳນັກງານຂໍ້ມູນຕ້ານການຟອກເງິນ

ເລກທີ 494/ສຕຟງ
ນະຄອນຫຼວງວຽງຈັນ, ວັນທີ 08 MAY 2020

# ແຈ້ງການ

**ເຖິງ:** ທ່ານ ຜູ້ອຳນວຍການທະນາຄານທຸລະກິດ ແລະ ຜູ້ຈັດການສາຂາທະນາຄານທຸລະກິດຕ່າງປະເທດ, ສະຖາບັນການເງິນຈຸລະພາກ, ໂຮງຊວດຈຳ, ບໍລິສັດເຊົ່າສິນເຊື່ອ, ບໍລິສັດຮັບບໍລິການໂອນເງິນ, ຮ້ານແລກປ່ຽນເງິນຕາ, ບໍລິສັດປະກັນໄພ ແລະ ບໍລິສັດຫຼັກຊັບ ທີ່ນັບຖື,

**ເລື່ອງ:** ການປັບປຸງລະບົບການລາຍງານ ຜ່ານລະບົບອອນລາຍ.

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 13/ຄຕຟງ, ລົງວັນທີ 19 ຕຸລາ 2015;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015.

ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ) ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອໃຫ້ການນຳໃຊ້ລະບົບການລາຍງານມີຄວາມພຽງພໍຕໍ່ການນຳໃຊ້ ແລະ ຕອບສະໜອງໄດ້ຄວາມຕ້ອງການຂອງ ສຕຟງ ແລະ ຜູ້ລາຍງານ ຈຶ່ງໄດ້ມີການປັບປຸງລະບົບການລາຍງານ ຜ່ານລະບົບອອນລາຍ ໂດຍການເພີ່ມຮູບແບບຂອງການໃຊ້ງານ (Functions) 03 ຮູບແບບຄື:

1. **ການລາຍງານອື່ນໆ:** ເພື່ອຊ່ວຍໃຫ້ ສາມາດແຈ້ງຕອບການຮ້ອງຂໍຂອງ ສຕຟງ ຫຼື ສົ່ງຂໍ້ມູນເພີ່ມເຕີມກ່ຽວກັບບົດລາຍງານ STR ມາໃຫ້ ສຕຟງ ໄດ້ຢ່າງວ່ອງໄວ ແລະ ສະດວກສະບາຍ;
2. **ການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ (CTR) ທີ່ໄດ້ລາຍງານຜ່ານມາ:** ສາມາດເບິ່ງການລາຍງານ CTR ທັງໝົດ ທີ່ເຄີຍລາຍງານມາຍັງ ສຕຟງ;
3. **ການປະກອບຄຳເຫັນ:** ສາມາດປະກອບຄຳຄິດເຫັນກ່ຽວກັບລະບົບການສົ່ງລາຍງານອອນລາຍ ໄດ້ວ່າຢາກໃຫ້ມີການປັບປຸງ ຫຼື ແກ້ໄຂຈຸດໃດ ເພື່ອຊ່ວຍໃຫ້ ສຕຟງ ນຳມາພິຈາລະນາ ແລະ ພັດທະນາລະບົບໃຫ້ດີຂຶ້ນຕໍ່ໄປ.

ສຳລັບລາຍລະອຽດ ສາມາດດາວໂຫຼດຄູ່ມືທີ່ກຳນົດຂັ້ນຕອນຕ່າງໆຂອງການລາຍງານ ທີ່ເວບໄຊທ໌ ສຕຟງ www.amlio.gov.la

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານດາວໂຫຼດ ເພື່ອປະຕິບັດຕາມເນື້ອໃນຂ້າງເທິງດ້ວຍ.

**ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ.**

ແພງສີ ແພງເມືອງ

- ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່: ສຳນັກງານຂໍ້ມູນຕ້ານການຟອກເງິນໂທ 021 264506